## ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 11 ມີນາ 2007 ( 03- 11 -2007)

---

# <u>ພຣະເຢຊູຊົງເປີດຕາພວກເຮົາ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ໂຢຮັນ 9:8-10, 20-22, 24-25, 30-33, 35-39

**<u>ຄວາມຈິງໃນພຣະຄັມພີ:</u>** ເມື່ອຄົນຜູ້ນຶ່ງໄດ້ຮັບການປ່ຽນແປງຊີວິດໂດຍພຣະເຢຊູແລ້ວ, ບໍ່ມີຜູ້ໃດຈະສາມາດຍາດແຍ່ງເອົາຊະນະໄດ້ວ່າ ປະສົບການທີ່ລາວໄດ້ຮັບນັ້ນໃຊ້ປໂຍດອັນໃດບໍ່ໄດ້.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ແມ່ນໄດ້ຈັດຕຽມ ແລະເລືອກໄວ້ເພື່ອຊ່ອຍໃຫ້ທ່ານໄດ້ຄົ້ນພົບເຖິງສິ່ງທີ່ພຣະເຢຊູໄດ້ຊົງເຮັດເພື່ອພວກເຮົາໂດຍ:

- ການຮູ້ເຂົ້າໃຈການມີປະສົບການກັບພຣະເຢຊູເປັນການສ່ວນຕົວເປັນສິ່ງຈຳເປັນ ແລະເປັນກຳລັງທີ່ຈະຮັກສາຄວາມເຊື່ອໄວ້ ແລະ
- ການນະມັສການກັບຜູ້ທີ່ສາມາດຊ່ອຍໃຫ້ຕາບອດຝ່າຍຈິດວິນຍານຂອງທ່ານໄດ້ເຫັນຮຸ່ງເຖິງເຣື່ອງຄວາມເຊື່ອ.

### <u>ການຈັດຕຽມຂອງຄຣູ:</u>

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**<u>ແຜນການສອນ</u>**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້.
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### <u>ແຜນການສອນ:</u>

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລົ້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

## <u>ບົດນຳ:</u>

1. ພຣະເຢຊູຄຣິດໄດ້ຊົງເຮັດຫຍັງເພື່ອພວກເຮົາ?
2. ອ່ານຫົວຂໍ້ບົດຮຽນມື້ນີ້ ແລະແນະນຳສັ້ນ ໆ.
3. **ສາຍຕາແຈ້ງ:** ທ່ານເຄີຍເຫັນຮຸ່ງດີ ຫລື ສາຍຕາມົວບໍ່?
4. ທ່ານໄດ້ເປີດຕາໃຫ້ກັບພຣະເຢຊູຢູ່ບໍ່?.
5. ທ່ານຈະນະມັສການພຣະອົງໃນຊີວິດຂອງທ່ານຢ່າງໃດ?
6. ຫາຂໍ້ມູນເຣື່ອງສາຍຕາມາສົນທະນາກັນ.

## 1. <u>ເຮົານີ້ແຫລະແມ່ນຄົນນັ້ນ:</u> ( ໂຢຮັນ 9:8-10)

ອ່ານ ໂຢຮັນ 9:1-7 ເພື່ອໃຫ້ໄດ້ໃຈຄວາມ ກ່ອນແລ້ວຈິ່ງ...

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 9:8-10
2) ນຳພານັກຮຽນໃຫ້ສັງເກດຄວາມສັບສົນຣະຫວ່າງຜູ້ຊາຍທີ່ຕາບອດນັ້ນກັບພວກທີ່ຮູ້ຈັກກັບລາວເຂົາເວົ້າວ່າຜູ້ນີ້ບໍ່ແມ່ນຜູ້ດຽວກັນກັບຜູ້ທີ່ເຮົາເຄີຍເຫັນບໍ່ແມ່ນຫລື?
3) ຄົນຜູ້ທີ່ພຣະເຢຊູໄດ້ຊົງເຮັດໃຫ້ຕາເຫັນຮຸ່ງນັ້ນໄດ້ສຳແດງໃຫ້ເຮົາເຫັນຫຍັງແດ່?
4) ໃຫ້ປຽບທຽບເບິ່ງຣະຫວ່າງຄົນທີ່ຮູ້ເຫັນການປິ່ນປົວຕາ ກັບບາງຄົນໃນສມັຍນີ້ທີ່ໄດ້ຖືກພຣະເຢຊູປ່ຽນແປງນັ້ນມີຄວາມຄິດເຫັນແນວໃດ?
5) ເວົ້າເຣື່ອງພຣະເຢຊູໄດ້ຊົງເປີດຕາຂອງຕົນສູ່ຄົນອື່ນຟັງ ວ່າພຣະອົງໄດ້ກະທຳໃຫ້ຕາຂອງທ່ານເຫັນແຈ້ງໂດຍວິທີໃດແລະແມ່ນຫຍັງ?
6) ໃນຊີວິດຄຣິສຕຽນຂອງທ່ານມີຫຍັງແດ່ທີ່ຄົນທັງຫລາຍຢາກຈະເຫັນ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນ:</u> ໂຢຮັນ 9:8-10

1) ເປັນຫຍັງຄົນທັງຫລາຍຈຶ່ງບໍ່ຈື່ຊາຍທີ່ເຄີຍຕາບອດນັ້ນ?
2) ຄົນທັງຫລາຍໄດ້ເວົ້າເຣື່ອງການປ່ຽນແປງໃນຊີວິດຂອງຊາຍຄົນນັ້ນຢ່າງໃດ?
3) ພວກເຮົາເປັນຄົນຕາບອດຂໍທານແນວໃດກ່ອນທີ່ມາພົບພຣະເຢຊູ?
4) ຕາຂອງພວກເຮົາໄດ້ເປີດແຈ້ງໂດຍພຣະເຢຊູແລ້ວພວກເຮົາໄດ້ເຫັນຄວາມແຕກຕ່າງຢ່າງໃດກ່ຽວກັບຊີວິດໃນເມື່ອກ່ອນກັບປະຈຸບັນ?

## 2. <u>ຈົ່ງຖາມລາວເອງ; ເພາະອາຍຸລາວກໍພົ້ນກະສຽນແລ້ວ:</u> ( ໂຢຮັນ 9:20-22)

ສລຸບຄວາມໃນ ໂຢຮັນ 9:13-19

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 9:20-22
2) ຄົນໃນສມັຍນີ້ມີທ່າທີຕໍ່ຜູ້ທີ່ເວົ້າວ່າ: ພຣະເຢຊູໄດ້ປິ່ນປົວຂ້ອຍ ແນວໃດ?
3) **ສົນທະນາ**: ເປັນຫຍັງການທີ່ເວົ້າວ່າ ພຣະເຢຊູເປີດຕາ ( ເຮັດໃຫ້ເຫັນຮຸ່ງ)ນັ້ນເຮັດໃຫ້ຄົນອື່ນບາງຄົນຕີຕົວຫ່າງອອກຈາກພວກເຮົາ?
4) ແມ່ນຫຍັງທີ່ເຮັດໃຫ້ພວກເຮົາຫວນກັບໄປຄິດເຫັນສະພາບເດີມທີ່ເຄີຍຢູ່ໃນອາການບອດນັ້ນດ້ວຍຄົນອື່ນບໍ່ຍອມເຫັນດີນຳການເວົ້າຂອງເຮົາໃນເຣື່ອງນີ້?

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:**</u> **ໂຢຮັນ 9:20-22**

1. ສິ່ງໃດທີ່ພໍ່ແມ່ຂອງຊາຍຄົນນີ້ຮູ້ ແລະບໍ່ຮູ້ນັ້ນແມ່ນຫຍັງ?
2. ເປັນຫຍັງພໍ່ແມ່ຂອງຊາຍຜູ້ນີ້ຈຶ່ງບໍ່ເຕັມໃຈເວົ້າເຣື່ອງລູກຂອງເຂົາເຈົ້າ?

## 3. <u>ສິ່ງດຽວທີ່ຂ້ານ້ອຍຮູ້:</u> ( ໂຢຮັນ 9:24-25, 30-33)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຢຮັນ 9:24-25, 30-33
2) **ອະທິບາຍ**: ຜູ້ນຳສາສນາຄົນຢິວໄດ້ພຍາຍາມປະຕິເສດການອັສຈັນທີ່ເກີດຂຶ້ນໃນຊີວິດຂອງຊາຍຄົນນີ້ແລະກໍເລີ້ມກ່າວຮ້າຍພຣະເຢຊູ.
3) ໃນພາກນີ້ແມ່ນຫຍັງເປັນສິ່ງທີ່ດີຂອງພຣະຄັມພີ?
4) ເວລາພວກເຮົາພົບກັບຄຳຖາມຕ່າງ ໆ ບາງທີກໍພົບຂໍ້ຫຍຸ້ງຍາກໃນການຫາຄຳຕອບເຊັ່ນກັນ.

5) ຖ້າຫາກທ່ານສາມາດບອກກັບຜູ້ທີ່ບໍ່ເປັນຄຣິສຕຽນນັ້ນ ມີສິ່ງນຶ່ງເທົ່ານັ້ນທີ່ທ່ານຈະບອກ ຫລືຖາມເຂົາໄດ້ຄື: ທ່ານຮູ້ເຣື່ອງພຣະເຢຊູບໍ່?
6) ທ່ານສາມາດເຮັດໃຫ້ຜູ້ໃດຜູ້ນຶ່ງມາເຊື່ອໃນພຣະເຢຊູໄດ້ບໍ່?
7) ມີຫຍັງອີກແດ່ທີ່ພວກເຮົາຕ້ອງການເພີ້ມເຕີມໃນຄຳພຍານຂອງພວກເຮົາ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> ໂຢຮັນ 9:24-25, 30-33
1. ມີສິ່ງໃດທີ່ຊາຍຄົນນັ້ນຮູ້ ແລະມີສິ່ງໃດທີ່ລາວບໍ່ຮູ້?
2. ພວກຟາຣີຊາຍຄິດຢ່າງໃດ?
3. ຊາຍຄົນນັ້ນໄດ້ຢືນໝັ້ນແລະສູ້ກັບການຫົວເລາະເຢາະເຢີ້ຍ ແລະການຫຍໍ້ຫຍັນໄດ້ຢ່າງໃດ?
4. ລາວໄດ້ຍຶດໝັ້ນໃນສິ່ງທີ່ລາວຮູ້ເຣື່ອງພຣະເຢຊູກະທຳ ແລະເສີມສ້າງຄວາມເຊື່ອໃຫ້ລາວໄດ້ໂດຍທາງໃດ?

**3. <u>ເຈົ້ານາຍເອີຍ, ຂ້ານ້ອຍວາງໃຈເຊື່ອແລ້ວ:</u>** 9:35-39
1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 9:35-39
2) ປະເມີນຜົນວ່າ ແມ່ນຫຍັງທີ່ຊາຍຄົນນັ້ນໄດ້ຮັບ ແລະແມ່ນຫຍັງທີ່ຊາຍຄົນນັ້ນສູນເສັຽໄປໃນລະຍະສັ້ນ ໆ?
3) ການໄດ້ແລະການເສັຽຂອງລາວແມ່ນສິ່ງໃດທີ່ສຳຄັນທີ່ສຸດສຳລັບລາວ? ທ່ານຮູ້ໄດ້ຢ່າງໃດ?
4) ຂໍໃຫ້ນັກຮຽນອ່ານ **ໂຢຮັນ 9:11,17,33,38** ເລັງໃສ່ຄຳວ່າ: **ສາຍຕາໃສແຈ້ງສະອາດ**
5) ມີຫຍັງເກີດຂຶ້ນໃນເມື່ອຊາຍຄົນນັ້ນໄດ້ເຫັນຮຸ່ງແລ້ວ?
6) ມີຫຍັງທີ່ມັກເກີດຂຶ້ນກັບຄົນຜູ້ທີ່ເຊື່ອຟັງ ? ເຊັ່ນ: ທາງຈິດວິນຍານ, ທາງການເປີດຈິດເປີດໃຈ...
7) ພວກເຮົາຮູ້ໄດ້ຢ່າງໃດວ່າພຣະເຢຊູຊົງເປັນຫ່ວງ ແລະເມດຕາຕໍ່ຊາຍທີ່ຕາບອດນັ້ນ?
8) ຕາມຄວາມຈິງແລ້ວຕາບອດປະເພດໃດທີ່ພຣະເຢຊູຕ້ອງການປິ່ນປົວ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດໃນພຣະຄັມພີ:</u> ໂຢຮັນ 9:35-39**
1) ເວລາມີຄົນປະຖິ້ມເຮົາຍ້ອນວ່າເຮົາມີຄວາມເຊື່ອໃນພຣະເຢຊູເຮົາຈະຕ້ອງເຮັດແນວໃດ?
2) ໃນເມື່ອຕາຂອງພວກເຮົາໄດ້ເປີດໃຫ້ເຫັນພຣະເຢຊູແລ້ວພວກເຮົາສົມຄວນຈະຕອບສນອງຢ່າງໃດ?
3) ສາສນາໄດ້ເຮັດໃຫ້ເຮົາຕາບອດຢ່າງໃດ?
4) ແມ່ນທາງໃດທີ່ເປັນທາງດຽວທີ່ສາມາດເປີດຕາເຮົາໄດ້.

**<u>ສລູບ</u>:**
1. ນະມັສການພຣະເຢຊູຄຣິດ ມີຄວາມໝາຍແນວໃດຕໍ່ການດຳເນີນຊີວິດຂອງພວກເຮົາ?
2. ບົດຮຽນຜ່ານມາກໍໄດ້ໃຫ້ຕົວຢ່າງທີ່ດີແກ່ພວກເຮົາໃນການໃຫ້ຄວາມໝາຍໃນການນະມັສການຂອງການດຳເນີນຊີວິດຄຣິສຕຽນຂອງພວກເຮົາ.
3. ໃຫ້ທຸກຄົນອ່ານພຣະຄັມພີ ອະທິຖານເປັນປະຈຳທຸກ ໆ ມື້ ທຸກ ໆ ວັນ.
4. ໃຫ້ພວກເຮົາເປີດຕາໃຈຂອງພວກເຮົາທຸກ ໆ ເວລາ.
5) ໜູນໃຈນັກຮຽນໃຫ້ໄດ້ຄິດພິຈາຣະນາ ຕຶກຕອງພຣະຄຳທີ່ໄກ້ຮຽນມາ.
6) ໃຫ້ນະມັສການດ້ວຍຈິດໃຈ ໃຫ້ສົມກັບຄວາມເຊື່ອຂອງຕົນໃນອົງພຣະເຢຊູຄຣິດ.
8. ອະທິຖານທູນຂໍຕໍ່ພຣະເຈົ້າໃຫ້ເສີມຄວາມເຂົ້າໃຈ ແລະຄວາມເຊື່ອໃນການປິດຫ້ອງຮຽນ.